ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---===000===---

ຄະນະກຳມະການຄຸ້ມຄອງຫຼັກຊັບ
ແລະ ຕະຫຼາດຫຼັກຊັບ

ເລກທີ 012/ຄລຕ.
ນະຄອນຫຼວງວຽງຈັນ, ວັນທີ 19/05/2011

# ຂໍ້ຕົກລົງ
# ວ່າດ້ວຍລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ, ລົງວັນທີ 24 ພຶດສະພາ 2010;
- ອີງຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕໍ່ກອງປະຊຸມ ຄລຕ ຄັ້ງທີ VIII, ວັນທີ 29 ເມສາ 2011.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ຜັນຂະຫຍາຍມາດຕາ 23 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ, ລົງວັນທີ 24 ພຶດສະພາ 2010 ຊຶ່ງກຳນົດຫຼັກການ, ລະບຽບການ ແລະ ມາດຕະການເພີ່ມເຕີມ ກ່ຽວກັບການຄຸ້ມຄອງນັກລົງທຶນຕ່າງປະເທດ ທີ່ມີຈຸດປະສົງຊື້-ຂາຍ ຮຸ້ນໃນຕະຫຼາດຫຼັກຊັບຢູ່ ສປປ ລາວ ເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ ທັງເປັນການສົ່ງເສີມ ແລະ ພັດທະນາຕະຫຼາດທຶນ.

**ມາດຕາ 2. ນັກລົງທຶນຕ່າງປະເທດ**

ນັກລົງທຶນຕ່າງປະເທດ ປະກອບດ້ວຍ: ບຸກຄົນ ແລະ ສະຖາບັນ.

- "ບຸກຄົນ" ໝາຍເຖິງ ຜູ້ທີ່ຖືສັນຊາດຕ່າງປະເທດ ທີ່ອາໃສຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ;
- "ສະຖາບັນ" ໝາຍເຖິງ ອົງການຈັດຕັ້ງທີ່ມີຖານະເປັນນິຕິບຸກຄົນ ຫຼື ບໍ່ມີຖານະນິຕິບຸກຄົນ ທີ່ສ້າງຕັ້ງ ແລະ ຂຶ້ນທະບຽນຖືກຕ້ອງ ຕາມກົດໝາຍຂອງຕ່າງປະເທດ.

**ມາດຕາ 3. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ຕໍ່ທະນາຄານດູແລຊັບສິນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບ ທີ່ຕັ້ງຢູ່ ສປປ ລາວ ແລະ ນັກລົງທຶນຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ II
## ລະຫັດນັກລົງທຶນຕ່າງປະເທດ

**ມາດຕາ 4. ການຂໍລະຫັດນັກລົງທຶນຕ່າງປະເທດ**

ນັກລົງທຶນຕ່າງປະເທດ ທີ່ມີຈຸດປະສົງຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບ ຕ້ອງຂໍລະຫັດນັກລົງທຶນຕ່າງປະເທດຈາກຕະຫຼາດຫຼັກຊັບ ໂດຍມອບສິດຢ່າງເປັນລາຍລັກອັກສອນ ໃຫ້ທະນາຄານດູແລຊັບສິນທີ່ຖືກຮັບຮອງ ໂດຍສຳນັກງານ ຄລຕ ຫຼື ບໍລິສັດຫຼັກຊັບ ທີ່ສ້າງຕັ້ງຂື້ນຕາມລະບຽບກົດໝາຍຂອງ ສປປ ລາວ ເພື່ອເປັນຜູ້ຕາງໜ້າດຳເນີນການ ຂໍລະຫັດນັກລົງທຶນຕ່າງປະເທດ.

**ມາດຕາ 5. ສຳນວນຄຳຮ້ອງຂໍລະຫັດນັກລົງທຶນຕ່າງປະເທດ**

ສຳນວນຄຳຮ້ອງຂໍລະຫັດນັກລົງທຶນຕ່າງປະເທດ ສຳລັບນັກລົງທຶນຕ່າງປະເທດປະເພດບຸກຄົນ ປະກອບມີ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມທີ່ຕະຫຼາດຫຼັກຊັບກຳນົດ;
2. ສຳເນົາໜັງສືຜ່ານແດນ ແລະ ບັດປະຈຳຕົວທີ່ໄດ້ຮັບການຢັ້ງຢືນຈາກອົງການທີ່ມີສິດອຳນາດ;
3. ໃບແຕ່ງຕັ້ງ ຫຼື ສັນຍາກັບທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ.

ສຳນວນຄຳຮ້ອງຂໍລະຫັດນັກລົງທຶນຕ່າງປະເທດສຳລັບປະເພດສະຖາບັນ ປະກອບມີດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມທີ່ຕະຫຼາດຫຼັກຊັບກຳນົດ;
2. ໃບແຕ່ງຕັ້ງ ຫຼື ສັນຍາກັບທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ;
3. ກົດລະບຽບພາຍໃນ ແລະ ສຳເນົາໃບທະບຽນວິສາຫະກິດ.

**ມາດຕາ 6. ການພິຈາລະນາສຳນວນຄຳຮ້ອງຂໍລະຫັດນັກລົງທຶນຕ່າງປະເທດ**

ພາຍຫຼັງ ໄດ້ຮັບສຳນວນຄຳຮ້ອງຂໍລະຫັດນັກລົງທຶນຕ່າງປະເທດ ຄົບຖ້ວນ ແລະ ຖືກຕ້ອງ ຕະຫຼາດຫຼັກຊັບ ຕ້ອງພິຈາລະນາອອກລະຫັດນັກລົງທຶນຕ່າງປະເທດ ພາຍໃນ ສາມ ວັນລັດຖະການ ນັບແຕ່ວັນທີໄດ້ຮັບສຳນວນຄຳຮ້ອງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

**ມາດຕາ 7. ການຍົກເລີກລະຫັດນັກລົງທຶນຕ່າງປະເທດ**

ຕະຫຼາດຫຼັກຊັບ ສາມາດຍົກເລີກລະຫັດນັກລົງທຶນຕ່າງປະເທດ ໃນກໍລະນີ ດັ່ງນີ້:

1. ນັກລົງທຶນຕ່າງປະເທດ ຂໍຍົກເລີກດ້ວຍຄວາມສະໝັກໃຈ;
2. ນັກລົງທຶນຕ່າງປະເທດ ຖືກຍຸບເລີກກິດຈະການ ຫຼື ລົ້ມລະລາຍ;

3. ພົບເຫັນຂໍ້ມູນທີ່ປະກອບສຳນວນຄຳຮ້ອງບໍ່ຖືກຕ້ອງ ພາຍຫຼັງໄດ້ອອກລະຫັດນັກລົງທຶນຕ່າງປະເທດ;
4. ນັກລົງທຶນຕ່າງປະເທດ ລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ;
5. ນັກລົງທຶນຕ່າງປະເທດ ບໍ່ໂອນເງິນເຂົ້າມາ ສປປ ລາວ ພາຍໃນ ໜຶ່ງ ປີ ນັບແຕ່ວັນເປີດບັນຊີ ເປັນຕົ້ນໄປ.

## ໝວດທີ III
## ການເຄື່ອນໄຫວຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ

**ມາດຕາ 8. ຂອບເຂດການຊື້ຮຸ້ນ**

ນັກລົງທຶນຕ່າງປະເທດ ສາມາດຊື້ຮຸ້ນຂອງ ບໍລິສັດໃດໜຶ່ງທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕາມບູລິມະສິດ ແລະ ອັດຕາສ່ວນໃດໜຶ່ງ ດັ່ງນີ້:

1. ລະບຽບການຂອງຂະແໜງການກ່ຽວຂ້ອງ;
2. ມະຕິກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດຈົດທະບຽນ;
3. ການກຳນົດຂອງ ຄລຕ ດັ່ງນີ້:
   - ນັກລົງທຶນຕ່າງປະເທດລວມກັນທັງໝົດ ສາມາດຊື້ຮຸ້ນໃນອັດຕາສ່ວນ ບໍ່ເກີນສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດຂອງ ບໍລິສັດຈົດທະບຽນໃດໜຶ່ງ;
   - ນັກລົງທຶນຕ່າງປະເທດໜຶ່ງລາຍ ສາມາດຊື້ຮຸ້ນໃນອັດຕາສ່ວນ ບໍ່ເກີນໜຶ່ງສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດ ຂອງບໍລິສັດຈົດທະບຽນໃດໜຶ່ງ.

**ມາດຕາ 9. ການເປີດບັນຊີເງິນ ແລະ ບັນຊີຫຼັກຊັບ**

ພາຍຫຼັງໄດ້ຮັບລະຫັດນັກລົງທຶນຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ນັກລົງທຶນຕ່າງປະເທດ ຕ້ອງປະຕິບັດ ດັ່ງນີ້:

1. ເປີດບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດນຳທະນາຄານດູແລຊັບສິນເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ພາຍໃນ ຫ້າ ວັນລັດຖະການນັບແຕ່ມື້ໄດ້ຮັບລະຫັດນັກລົງທຶນຕ່າງປະເທດເປັນຕົ້ນໄປ. ການຊຳລະ ທຸລະກຳຊື້-ຂາຍຮຸ້ນແຕ່ລະຄັ້ງ ຕ້ອງດຳເນີນຜ່ານບັນຊີເງິນຝາກເປັນສະກຸນເງິນກີບ ເທົ່ານັ້ນ. ການເປີດບັນຊີເງິນຝາກ ຕ້ອງເປີດຢູ່ທະນາຄານດູແລຊັບສິນແຫ່ງດຽວເທົ່ານັ້ນ ແຕ່ສາມາດປ່ຽນເປັນທະນາຄານດູແລຊັບສິນອື່ນໄດ້;
2. ເປີດບັນຊີຫຼັກຊັບນຳບໍລິສັດຫຼັກຊັບ ດ້ວຍຕົນເອງ ຫຼື ຜ່ານທະນາຄານດູແລຊັບສິນ ທີ່ຕົນໄດ້ມອບສິດຢ່າງເປັນລາຍລັກອັກສອນ.

**ມາດຕາ 10. ການຊື້-ຂາຍຮຸ້ນ**

ການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ຕ້ອງສົ່ງຄຳສັ່ງຊື້-ຂາຍຜ່ານບໍລິສັດຫຼັກຊັບ ທີ່ຕົນໄດ້ເປີດບັນຊີນຳ.

**ມາດຕາ 11. ການງົດຊົ່ວຄາວການເຄື່ອນໄຫວບັນຊີເງິນຝາກ**

ສຳນັກງານ ຄລຕ ມີສິດງົດຊົ່ວຄາວການເຄື່ອນໄຫວບັນຊີເງິນຝາກ ຂອງນັກລົງທຶນຕ່າງປະເທດ ຕາມການເຫັນດີ ຂອງ ຄລຕ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການຊື້-ຂາຍຮຸ້ນຜິດປົກກະຕິ ທີ່ໄດ້ສ້າງ ຫຼື ອາດສ້າງຜົນກະທົບອັນຮ້າຍແຮງຕໍ່ນັກລົງທຶນ, ບໍລິສັດຈົດທະບຽນ ຫຼື ລະບົບຕະຫຼາດທຶນ;
2. ການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງໃນຂົງເຂດຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
3. ເຈົ້າໜ້າທີ່ສົງໃສວ່າເງິນໃນບັນຊີ ໄດ້ມາຈາກການກະທຳຜິດກົດໝາຍຂອງສາກົນ ຫຼື ຂອງ ສປປ ລາວ;
4. ກໍລະນີອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

ການງົດຊົ່ວຄາວການເຄື່ອນໄຫວບັນຊີເງິນຝາກ ຂອງນັກລົງທຶນຕ່າງປະເທດຈະຖືກຍົກເລີກ ໃນກໍລະນີບັນຫາ ຂໍ້ 1; 2; 3 ແລະ ຂໍ້ 4 ຂອງມາດຕານີ້ ໄດ້ຮັບການແກ້ໄຂ.

## ໝວດທີ IV
## ທະນາຄານດູແລຊັບສິນ

**ມາດຕາ 12. ທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ແມ່ນທະນາຄານທຸລະກິດທີ່ຕັ້ງ ຢູ່ ສປປ ລາວ ທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບຮອງ ຈາກສຳນັກງານ ຄລຕ ໃຫ້ເປັນຜູ້ຄຸ້ມຄອງ ແລະ ບໍລິຫານຊັບສິນທາງດ້ານການເງິນໃຫ້ແກ່ນັກລົງທຶນຕ່າງປະເທດ.

**ມາດຕາ 13. ເງື່ອນໄຂການຮັບຮອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ທີ່ຈະໄດ້ຮັບການຮັບຮອງ ໂດຍສຳນັກງານ ຄລຕ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນທຸລະກິດດ້ານການທະນາຄານຢ່າງຕ່ຳ ສາມ ປີ, ມີກຳໄລຢ່າງຕໍ່ເນື່ອງ ແລະ ມີສະພາບຄ່ອງທາງດ້ານການເງິນທີ່ດີ;
2. ຖອກທຶນຈົດທະບຽນຄົບຖ້ວນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ປະຕິບັດຕາມລະບຽບວ່າດ້ວຍຄວາມໝັ້ນຄົງ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກຢ່າງຖືກຕ້ອງ ແລະ ຄົບຖ້ວນ;
3. ມີພະແນກຄຸ້ມຄອງຊັບສິນ;
4. ມີພະນັກງານ ທີ່ຊຳນານງານທາງດ້ານການຄຸ້ມຄອງຊັບສິນພຽງພໍ;
5. ມີລະບົບການຄຸ້ມຄອງ ແລະ ບໍລິຫານຊັບສິນ ທີ່ມີຄວາມຮັບປະກັນ ແລະ ຄ່ອງຕົວ;
6. ມີລະບົບການສະສາງ-ຊຳລະເງິນ ທີ່ຮັບປະກັນ ແລະ ຄ່ອງຕົວທັງພາຍໃນ ແລະ ຕ່າງປະເທດ;
7. ມີລະບົບການຕິດຕາມບັນຊີຫຼັກຊັບ ທີ່ຮັບປະກັນ ແລະ ຄ່ອງຕົວ;
8. ເປັນທະນາຄານ ທີ່ມີຄວາມໝັ້ນຄົງ ແລະ ມີຄວາມໜ້າເຊື່ອຖື.

**ມາດຕາ 14. ສຳນວນຄຳຮ້ອງ**

ສຳນວນຄຳຮ້ອງສະເໜີຂໍການຮັບຮອງເປັນທະນາຄານດູແລຊັບສິນ ປະກອບດ້ວຍເອກະສານ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມຂອງສຳນັກງານ ຄລຕ;
2. ສຳເນົາໃບທະບຽນວິສາຫະກິດ;
3. ເອກະສານຢັ້ງຢືນການຖອກທຶນຈົດທະບຽນ ຈາກທະນາຄານ ແຫ່ງ ສປປ ລາວ;
4. ກົດລະບຽບພາຍໃນຂອງທະນາຄານ.

**ມາດຕາ 15. ໜ້າທີ່ຂອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ມີໜ້າທີ່ ດັ່ງນີ້:

1. ເປີດບັນຊີເງິນຝາກ ໃຫ້ນັກລົງທຶນຕ່າງປະເທດ;
2. ຄຸ້ມຄອງບັນຊີເງິນຝາກຂອງນັກລົງທຶນຕ່າງປະເທດ ໂດຍໃຫ້ສອດຄ່ອງກັບບັນຊີຫຼັກຊັບ ແລະ ການໂອນເງິນເຂົ້າ-ອອກປະເທດ;
3. ບໍລິການສະສາງ, ຊໍາລະເງິນ ທີ່ຕິດພັນກັບການຊື້-ຂາຍຮຸ້ນ ໃຫ້ແກ່ນັກລົງທຶນຕ່າງປະເທດ;
4. ໃຫ້ການບໍລິການແລກປ່ຽນເງິນຕາຕ່າງປະເທດ ເພື່ອເປົ້າໝາຍຊື້-ຂາຍຮຸ້ນ;
5. ໂອນເງິນເຂົ້າ-ອອກ ສປປ ລາວ ໃຫ້ແກ່ນັກລົງທຶນຕ່າງປະເທດ ແລະ ລາຍງານໃຫ້ກົມນະໂຍບາຍເງິນຕາ ຂອງທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານ ຄລຕ ທຸກໆວັນ;
6. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຕາມການມອບໝາຍຂອງນັກລົງທຶນຕ່າງປະເທດ ຢ່າງເປັນລາຍລັກອັກສອນ;
7. ຕິດຕາມກວດກາແຫຼ່ງທີ່ມາຂອງເງິນລູກຄ້າ ໂດຍປະຕິບັດຕາມຫຼັກການກວດສອບຄວາມຖືກຕ້ອງຂອງລູກຄ້າ ເມື່ອພົບເຫັນພຶດຕິກຳທີ່ໜ້າສົງໃສ ຫຼື ຜິດລະບຽບຕ້ອງລາຍງານຕໍ່ພາກສ່ວນກ່ຽວຂ້ອງທັນທີ;
8. ເກັບຮັກສາຂໍ້ມູນການໂອນເງິນເຂົ້າ-ອອກ, ແລກປ່ຽນເງິນ, ໃບຮັບເງິນ, ການຊໍາລະເງິນ ແລະ ບັນທຶກທຸລະກຳທາງການເງິນ ແລະ ຂໍ້ມູນກ່ຽວຂ້ອງອື່ນໆ ຂອງນັກລົງທຶນຕ່າງປະເທດໄວ້ຢ່າງໜ້ອຍ ສິບ ປີ;
9. ສະໜອງຂໍ້ມູນ ກ່ຽວກັບການເຄື່ອນໄຫວຂອງນັກລົງທຶນຕ່າງປະເທດ ຕາມການກຳນົດຂອງສຳນັກງານ ຄລຕ;
10. ປະຕິບັດໜ້າທີ່ອື່ນໆ ຕາມການກຳນົດຂອງລະບຽບກົດໝາຍ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 16. ການຈັດຕັ້ງປະຕິບັດ**

ສຳນັກງານ ຄລຕ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 17. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ